ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ໄຊຍະບູລີ

ເລກທີ.1100../ຈຂ.ຊບ

ໄຊຍະບູລີ, ວັນທີ.12../.10../2018

# ຂໍ້ຕົກລົງ

## ວ່າດ້ວຍ ການຄຸ້ມຄອງ

## ພັດທະນາ ແລະ ບໍລິຫານຕົວເມືອງ ໄຊຍະບູລີ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ), ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ພາກທີ III, ໝວດທີ IV, ມາດຕາ 20, ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012.
- ອີງຕາມ ມະຕິ ເລກທີ 54/ສພຂ.ຊຍ, ລົງວັນທີ 6 ກັນຍາ 2018, ວ່າດ້ວຍການຮັບຮອງເອົາ ຂໍ້ຕົກລົງ.
- ອີງຕາມ ດຳລັດ ສະບັບເລກທີ 177/ນຍ, ລົງວັນທີ 22 ທັນວາ 1997, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ.

## ເຈົ້າແຂວງ ໄຊຍະບູລີ ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 01.** ຈຸດປະສົງ.

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການໃນການຄຸ້ມຄອງເທດສະບານເມືອງ ໄຊຍະບູລີ ແລະ ກຳນົດການເກັບລາຍຮັບ ແລະ ການນຳໃຊ້ທຶນ ເພື່ອນຳໃຊ້ເຂົ້າໃນການພັດທະນາຕົວເມືອງໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ຊຸກຍູ້ສ້າງຕົວເມືອງໄຊຍະບູລີ ເປັນຕົວເມືອງດ້ານສິ່ງແວດລ້ອມ, ເປັນຕົວເມືອງສີຂຽວ, ສະອາດ, ສວຍງາມ.

**ມາດຕາ 02.** ນິຍາມ.

2.1. ການຄຸ້ມຄອງຕົວເມືອງໄຊຍະບູລີ ແມ່ນການຄຸ້ມຄອງເທດສະບານເມືອງໄຊຍະບູລີ ໃນຂອບເຂດ 24 ບ້ານຄື: ບ້ານ ນາແລ້ງຫຼວງ, ບ້ານ ນາລາ, ບ້ານ ວັງຊອຍ, ບ້ານ ສອນ, ບ້ານ ທ່ານາ, ບ້ານ ປົ່ງ, ບ້ານ ສີມຸງຄຸນ, ບ້ານ ສີເມືອງ, ບ້ານ ນາໄຮ, ບ້ານ ນາຍາວ, ບ້ານ ຖິ່ນ, ບ້ານ ດອນໃໝ່, ບ້ານ ດອນເງິນ, ບ້ານ ບຸ່ງ, ບ້ານ ຜາປູນ, ບ້ານ ໃຫຍ່, ບ້ານແກ້ງ, ບ້ານ ໜອງແຊງ, ບ້ານ ນາເລົ່າ, ບ້ານ ນາຕໍ່ນ້ອຍ, ບ້ານ ນາຕໍ່ໃຫຍ່, ບ້ານ ວັງຂາມ, ບ້ານ ລ້ອງປໍ່, ບ້ານ ໂນນສະຫວັນ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມສະອາດສວຍງາມ ພ້ອມທັງຈັດສັນການຂາຍ

ເຄື່ອງຊະຊາຍ, ການໂຄສະນາເຜີຍແຜ່, ຕິດຕາມ, ຊຸກຍູ້ສັງຄົມເຮັດອະນາໄມ, ປະດັບປະດາໃນຂອບເຂດຄວາມຮັບຜິດຊອບຂອງຕົນ, ໂດຍສະເພາະແມ່ນອະນາໄມຕັດຫຍ້າ, ເຊາະຫຍ້າຂອບທາງ, ອະນາໄມຮູນ້ຳ, ຮ່ອງລະບາຍນ້ຳຂ້າງທາງ, ຕ້ານເຈື່ອນ, ຕັດແຕ່ງຕົ້ນໄມ້ປະດັບແຄມທາງ ແລະ ອື່ນໆ.

2.2. ການເກັບລາຍຮັບ ແລະ ການນຳໃຊ້ທຶນ ແມ່ນການຄຸ້ມຄອງລາຍຮັບ-ລາຍຈ່າຍດ້ວຍການເກັບຄ່າບໍລິການ ແລະ ຄ່າພັນທະຕ່າງໆ ທີ່ເປັນລາຍຮັບທີ່ບໍ່ຊ້ຳຊ້ອນກັບພາກສ່ວນອື່ນ ຈາກສັງຫາລິມະຊັບ, ອະສັງຫາລິມະຊັບ, ຈາກສ່ວນແບ່ງຕ່າງໆ ຕາມຂໍ້ຕົກລົງ ຂອງລັດຖະມົນຕີກະຊວງການເງິນ ເລກທີ 2083/ກງ, ລົງວັນທີ 18 ຕຸລາ 2002, ວ່າດ້ວຍການ ຄຸ້ມຄອງລາຍຮັບ-ລາຍຈ່າຍ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ.

ມາດຕາ 03. ອະທິບາຍຄຳສັບ.

3.1. ການບໍລິການເກັບມ້ຽນຂີ້ເຫຍື້ອ ໝາຍເຖິງ ການຮັບໃຊ້ເກັບມ້ຽນຂີ້ເຫຍື້ອຄົວເຮືອນ, ສຳນັກງານ, ສັງ ຄົມເພື່ອນຳໄປກຳຈັດຢູ່ສະໜາມຂີ້ເຫຍື້ອ ເຮັດໃຫ້ຕົວເມືອງມີຄວາມສະອາດ.

3.2. ຂີ້ເຫຍື້ອທົ່ວໄປ ໝາຍເຖິງ ຂີ້ເຫຍື້ອຄົວເຮືອນ, ສຳນັກງານ, ກົມກອງ, ຫ້ອງການ ທີ່ມີຈຳນວນໜ້ອຍ.

3.3. ຂີ້ເຫຍື້ອອັນຕະລາຍ ໝາຍເຖິງ ຂີ້ເຫຍື້ອຈາກຫ້ອງຜ່າຕັດ, ຢາວັກແຊງ, ສານເຄມີ, ວັດຖຸເປັນພິດ, ທາດເບື່ອ, ທາດລະເບີດ ແລະ ອື່ນໆ ທີ່ເປັນອັນຕະລາຍ.

3.4. ຂີ້ເຫຍື້ອພິເສດ ໝາຍເຖິງ ຂີ້ເຫຍື້ອຈາກການຕັດແຕ່ງຕົ້ນໄມ້, ງານບຸນ, ງານດອງ,ການທຸບມ້າງສິ່ງກໍ່ສ້າງ,ສິ່ງປຸກສ້າງ ແລະ ອື່ນໆ ທີ່ມີຈຳນວນຫຼາຍ.

3.5. ພັນທະ ໝາຍເຖິງ ການປະກອບສ່ວນຊຸກຍູ້ຂອງສັງຄົມຕໍ່ວຽກງານດ້ວຍວັດຖຸ, ອຸປະກອນ, ເງິນຄຳແລະ ເຫື່ອແຮງ.

3.6. ຄອບຄົວທົ່ວໄປ ໝາຍເຖິງ ຄອບຄົວພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າທີ່ບໍ່ເຮັດທຸລະກິດ.

3.7. ຄອບຄົວທຸລະກິດໝາຍເຖິງ ຜູ້ປະກອບການຂາຍເຄື່ອງໂດຍຖືກຕ້ອງຕາມກົດໝາຍນັບທັງທີ່ມີທະບຽນ ແລະ ບໍ່ມີທະບຽນ.

3.8. ນ້ຳເສຍຄົວເຮືອນ ໝາຍເຖິງການຊົມໃຊ້ນ້ຳຈາກຄອບຄົວ, ຜູ້ປະກອບການ, ບໍລິສັດ, ຫ້າງຮ້ານລັດວິສາຫະກິດ, ພະແນກການ, ອົງການທີ່ເປັນພື້ນຖານທາງດ້ານການສ້າງຊີວະພາບ ຫຼື ເປັນການສ້າງໜໍ່ແໜງຂອງມີລະພິດຕໍ່ຕ້ານສິ່ງແວດລ້ອມໃນຕົວເມືອງ.

3.9. ການນຳໃຊ້ທີ່ດິນຂອງລັດ ໝາຍເຖິງ ບຸກຄົນທີ່ມີການນຳໃຊ້ໃນການຜະລິດ, ຄ້າຂາຍໂດຍບໍ່ມີໃບກຳມະສິດນຳທີ່ດິນໂດຍລັດເປັນຜູ້ໃຫ້ເຊົ່າ, ສຳປະທານທີ່ບໍ່ຊ້ຳຊ້ອນກັບການເກັບ ແລະ ສຳປະທານຈາກພາກສ່ວນກ່ຽວຂ້ອງເຊັ່ນ: ນຳໃຊ້ເຂດສະຫງວນແຄມນ້ຳ, ເຂດສະຫງວນແຄມທາງ ເປັນການຊົ່ວຄາວອື່ນໆ.

3.10. ດິນທີ່ມີການພັດທະນາ ແມ່ນທີ່ດິນທີ່ມີການດັດແປງ, ບຸກເບີກໃຫ້ເປັນດິນພຽງ ສາມາດຈັດງານສະຖານທີ່ຕ່າງໆໄດ້.

3.11. ດິນທີ່ບໍ່ມີການພັດທະນາ ແມ່ນທີ່ດິນທຳມະຊາດທີ່ບໍ່ໄດ້ລົບກວນບຸກເບີກຖາກຖາງປັບປຸງ.

ມາດຕາ 04. ຂອບເຂດການນຳໃຊ້.

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຄຸ້ມຄອງຂອບເຂດພື້ນທີ່ 24 ບ້ານເທດສະບານເມືອງໄຊຍະບູລີ ຕາມແຜນຜັງກຳນົດ, ບຸກຄົນ, ນິຕິບຸກຄົນ, ຜູ້ປະກອບການຕ່າງໆ ທຸກການຈັດຕັ້ງພາກລັດ ແລະ ເອກະຊົນທັງພາຍໃນປະເທດ ແລະ ຕ່າງປະເທດທີ່ມີການປະພຶດ, ຝືນຕໍ່ລະບຽບສະບັບນີ້.

## ໝວດທີ 2

## ການຄຸ້ມຄອງ, ການຈັດສັນ ແລະ ການພັດທະນາ

ມາດຕາ 05. ການຄຸ້ມຄອງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ້ອງໄດ້ເອົາໃຈໃສ່ຄຸ້ມຄອງຕົວເມືອງ ໃຫ້ມີຄວາມສະອາດງາມຕາ, ປະດັບປະດາຕົວເມືອງ ໃຫ້ມີຄວາມຮຸ່ງເຮືອງເຫຼືອງເຫຼື້ອມຢູ່ສະເໝີ, ຕົ້ນໄມ້ຢູ່ໃນຂອບເຂດແບ່ງຄວາມຮັບຜິດຊອບໃຫ້ ຕ້ອງມີການຕັດແຕ່ງໃຫ້ງາມ, ການວາງເຄື່ອງຂາຍຕ້ອງມີຄວາມເປັນລະບຽບ, ການຈອດລົດຕາມແຄມທາງຕ້ອງຈອດຕາມຈຸດທີ່ກຳນົດໃຫ້ຈອດ, ການຕໍ່ເຕີມເຮືອນ, ຮ້ານ, ການຕິດຕັ້ງປ້າຍໂຄສະນາຕ່າງໆ ຕ້ອງປະຕິບັດຕາມລະບຽບກົດໝາຍວາງອອກ, ການຂົນສົ່ງຫີນ ດິນ, ຊາຍ ເຂົ້າໃນຕົວເມືອງຕ້ອງມີຜ້າປົກປິດ, ບໍ່ໃສ່ລົ້ນກະບະລົດ, ບໍ່ຕົກເຮ່ຍຕາມເສັ້ນທາງ, ການຂົນສົ່ງເຄື່ອງຮັບໃຊ້ອຸປະໂພກ ແລະ ບໍລິໂພກ ຕ່າງໆ ເຂົ້າໃນຕົວເມືອງ ຕ້ອງຮັບປະກັນ ບໍ່ໃສ່ເກີນນ້ຳໜັກທີ່ກຳນົດ ແລະ ຕ້ອງເຂົ້າໃນຊ່ວງທີ່ຕົວເມືອງບໍ່ແອອັດ, ດິນເປົ່າຫວ່າງຕ້ອງໄດ້ມີການຖາກຖາງ, ຕັດຫຍ້າ, ອະນາໄມຮ່ອງນ້ຳ, ຮູນ້ຳຂ້າງທາງໃຫ້ສະອາດ, ການຈັດງານຕ່າງໆ ຕ້ອງປະຕິບັດຕາມລະບຽບກົດໝາຍວາງອອກ, ທຸກຄອບຄົວ, ສຳນັກງານຕ້ອງໄດ້ປະດັບປະດາໜ້າເຮືອນ, ສຳນັກງານຂອງຕົນດ້ວຍການປູກຫຍ້າ, ປູກດອກໄມ້, ວາງໂຖດອກໄມ້, ສ້າງຮົ້ວງາມ, ເຮັດອະນາໄມໃຫ້ມີຄວາມສະອາດສວຍງາມການຜະລິດເຄື່ອງອຸປະໂພກ ແລະ ບໍລິໂພກຕ່າງໆຕ້ອງຮັບປະກັນ ແລະ ບໍ່ມີການລົບກວນຄົນອື່ນຕ້ອງໄດ້ເອົາໃຈໃສ່ຮັກສາຄວາມສະອາດຢ່າງເປັນປະຈຳ.

ມາດຕາ 06. ການຈັດສັນ.

ອົງການພັດທະນາ ແລະ ບໍລິຫານຕົວເມືອງ ມີໜ້າທີ່ຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ມີການວາງແຜນ, ຂຶ້ນແຜນ, ການກໍ່ສ້າງ, ສ້ອມແປງບຳລຸງຮັກສາ, ຄຸ້ມຄອງ, ຈັດສັນສະຖານທີ່ສາທາລະນະ, ລະບົບຮ່ອງລະບາຍນ້ຳທຳມະຊາດ, ຮ່ອງລະບາຍນ້ຳແຄມທາງ, ສວນດອກໄມ້ຕາມເສັ້ນທາງ, ດອນແບ່ງທາງ. ນຳພາຕິດຕາມ, ກວດກາການຈັດຕັ້ງປະຕິບັດກົດລະບຽບ ການຄຸ້ມຄອງຕົວເມືອງຢູ່ຂັ້ນບ້ານ, ການເຮັດອະນາໄມປະດັບປະດາຕົວເມືອງ ແລະ ອື່ນໆ ໃນເທດສະບານເມືອງໄຊຍະບູລີ.

ມາດຕາ 07. ການພັດທະນາ.

ການພັດທະນາຕົວເມືອງໄຊຍະບູລີ ແມ່ນໜ້າທີ່ຂອງໝົດທຸກຄົນ, ເຊິ່ງເລີ່ມຈາກຄອບຄົວ, ບ້ານ, ອົງການຈັດຕັ້ງຕ່າງໆ ທຸກພາກສ່ວນມີສ່ວນຮ່ວມໃຫ້ກາຍເປັນຄວາມຮັບຜິດຊອບຂອງທ້ອງຖິ່ນເຊັ່ນ: ການກໍ່ສ້າງ, ການສ້ອມແປງ, ການຕົບແຕ່ງປະດັບປະດາ, ການໂຄສະນາຕ່າງໆ, ການຜະລິດກະສິກຳ, ອຸດສາຫະກຳ, ການເຮັດທຸລະກິດ ແລະ ກິດຈະກຳທີ່ສົ່ງອອກ, ການຄ້າຂາຍຕ້ອງເອົາໃຈໃສ່ໃນການປົກປັກຮັກສາຕົວເມືອງໃຫ້ມີຄວາມສະອາດ, ສວຍງາມເຮັດໃຫ້ຕົວເມືອງເປັນຕາໜ້າຢູ່, ໜ້າທ່ອງທ່ຽວຊົມເພື່ອດຶງດູດບັນດານັກທ່ອງທ່ຽວຈາກພາຍໃນ ແລະ ຕ່າງປະເທດ.

## ໝວດທີ 3
## ສິດ, ໜ້າທີ່ ແລະ ການກວດກາ

**ມາດຕາ 08. ສິດຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ.**

8.1. ພົວພັນ, ເຈລະຈາ ແລະ ກ້າວເຖິງການເຊັນສັນຍາ, ອະນຸສັນຍາ ແລະ ຂໍ້ຜູກພັນກູ້ຢືມຫລືຊ່ວຍເຫລືອລ້າກັບພາກສ່ວນຕ່າງໆຂອງພາຍໃນ, ຕ່າງປະເທດ ແລະ ອົງການຈັດຕັ້ງມະຫາຊົນຕາມລະບຽບກົດໝາຍວາງອອກ.

8.2. ເປັນເຈົ້າຂອງ ແລະ ນໍາໃຊ້ພາຫະນະກົນຈັກ, ວັດຖຸອຸປະກອນຕ່າງໆ ພ້ອມທັງຊັບສິນບັດອື່ນໆຂອງຕົນ ລວມທັງສິດທີ່ນໍາໃຊ້ທີ່ດິນ ຕາມການມອບໝາຍຂອງຂະແໜງການເງິນ.

8.3. ມີສິດ ຖືບັນຊີ, ເກັບລາຍຮັບຕາມທີ່ໄດ້ລະບຸໄວ້ໃນໝວດທີ v ຂອງດໍາລັດ ເລກທີ 177/ນຍ ແລະ ການນໍາໃຊ້ທຶນຈາກພາຍໃນ ແລະ ຕ່າງປະເທດ ຕາມການອະນຸມັດຂອງສະພາແຫ່ງຊາດ.

8.4. ສະເໜີປັບປຸງໂຄງປະກອບການຈັດຕັ້ງ, ຊັບຊ້ອນ, ແຕ່ງຕັ້ງ, ເລື່ອນຊັ້ນ, ຍົກຍ້າຍ, ປົດຕໍາແໜ່ງ, ຍ້ອງຍໍ ແລະ ປະຕິບັດວິໄນຕໍ່ລັດຖະກອນທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ.

8.5. ມີສິດ ສ້າງລະບຽບການພາຍໃນ ແລະ ປັບໃໝຜູ້ລະເມີດກົດລະບຽບຂອງລັດ ແລະ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງວາງອອກ ບົນພື້ນຖານການເຫັນດີເປັນເອກະພາບກັບເຈົ້າແຂວງ.

8.6. ພົວພັນ ແລະ ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ເພື່ອປະຕິບັດໜ້າທີ່ຂອງຕົນໃຫ້ສໍາເລັດຜົນ.

**ມາດຕາ 09. ໜ້າທີ່ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ.**

9.1. ວາງແຜນ,ຈັດຕັ້ງປະຕິບັດ, ຄຸ້ມຄອງ ແລະ ກວດກາ ວຽກງານພັດທະນາຕົວເມືອງ, ໃນໄລຍະເບື້ອງຕົ້ນສຸມໃສ່ບັນດາກິດຈະການ ທີ່ເປັນບຸລິມະສິດຂອງໂຄງການພັດທະນາ ຢູ່ໃນເນື້ອທີ່ຄຸ້ມຄອງຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ, ຫລັງຈາກນັ້ນຈຶ່ງຂະຫຍາຍບັນດາວຽກງານເຫຼົ່ານັ້ນໃຫ້ການຍເປັນຕົວເມືອງເທດສະບານຢ່າງສົມບູນ.

9.2. ກໍ່ສ້າງ, ປັບປຸງ, ບູລະນະໂຄງລ່າງ ແລະ ການບໍລິການຕົວເມືອງ ເຊິ່ງລວມມີ: ຖະໜົນຫົນທາງ, ຮ່ອງລະບາຍນໍ້າ, ເກັບມ້ຽນ ແລະ ກໍາຈັດຂີ້ເຫຍື້ອ, ປ້ອງກັນຕ້ານເຈື່ອນ, ປ້ອງກັນນໍ້າຖ້ວມ, ອານາໄມ ແລະ ຮັກສາສິ່ງແວດລ້ອມ, ແສງສະຫວ່າງສາທາລະນະ, ສວນສາທາລະນະ.

9.3. ຄຸ້ມຄອງ ແລະ ຄວບຄຸມການຈັດຕັ້ງປະຕິບັດວຽກງານການປຸກສ້າງ ແລະ ການພັດທະນາອື່ນໆໃນຂອບເຂດຂອງ ອົງການພັດທະນາ ແລະ ບໍລິຫານຕົວເມືອງ ທີ່ກໍານົດໄວ້ ໂດຍມີການປະສານສົມທົບກັບພາກສ່ວນກ່ຽວຂ້ອງ.

9.4. ສະໜອງຂໍ້ມູນຂ່າວສານ ແລະ ເອກະສານເຕັກນິກອັນຈໍາເປັນຕ່າງໆ ທີ່ກ່ຽວພັນກັບການພັດທະນາຕົວເມືອງໃນເຂດ ອົງການພັດທະນາ ແລະ ບໍລິຫານຕົວເມືອງ ໃຫ້ແກ່ອໍານາດການປົກຄອງແຂວງ, ເມືອງ, ບ້ານ ແລະ ອົງການຈັດຕັ້ງມະຫາຊົນ ເພື່ອປຸກລະດົມຂົນຂວາຍ

ປະຊາຊົນ ໃຫ້ເຂົ້າຮ່ວມໃນການພັດທະນາ ແລະ ບຸລະນະປົວແປງຕາມແຜນການພັດທະນາຕົວເມືອງ.

9.5. ມີໜ້າທີ່ ສ້າງແຫຼ່ງລາຍຮັບ ຕາມທີ່ໄດ້ລະບຸໄວ້ໃນໝວດທີ v ຂອງດຳລັດເລກທີ 177/ນຍ ແລະ ນຳໃຊ້ທຶນດັ່ງກ່າວຕາມເປົ້າໝາຍທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

9.6. ໜ້າທີ່ອື່ນໆ ທີ່ເຫັນວ່າຈຳເປັນເຊິ່ງຖືກອະນຸມັດ ແລະ ມອບໝາຍໃຫ້ໂດຍເຈົ້າແຂວງ.

ມາດຕາ 10. ໜ້າທີ່ ຂອງອົງການປົກຄອງບ້ານ.

10.1. ຄຸ້ມຄອງຂອບເຂດບ້ານຂອງຕົນໃນທຸກດ້ານຮ່ວມກັບອົງການຈັດຕັ້ງຂອງລັດ.

10.2. ນຳພາປະຊາຊົນກໍ່ສ້າງສ້ອມແປງຖະໜົນຫົນທາງ, ຮ່ອງລະບາຍນ້ຳ ແລະ ປົກປັກຮັກສາຊັບສົມບັດລວມຂອງບ້ານພ້ອມກັນນັ້ນຄະນະຮັບຜິດຊອບຂັ້ນບ້ານ ຕ້ອງນຳພາຄອບຄົວ, ສຳນັກງານຕ່າງໆ ໃນຂອບເຂດບ້ານຂອງຕົນປົວລະບັດຮັກສາໜ້າເຮືອນ, ໜ້າສຳນັກງານທີ່ຕິດກັບຖະໜົນຫົນທາງໃຫ້ມີຄວາມສະອາດ ແລະ ປະດັບປະດາຕົ້ນດອກໄມ້, ໃຖດອກໄມ້ໃຫ້ສວຍງາມ.

10.3. ມອບຄວາມຮັບຜິດຊອບໃຫ້ຄອບຄົວ, ສຳນັກງານຕ່າງໆປົວລະບັດ, ປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍ, ສະອາດ, ສວຍງາມໃນຂອບເຂດທີ່ຢູ່ອາໄສຂອງຕົນ ແລະ ອ້ອມຮອບ.

10.4. ກວດກາທຸກຄອບຄົວຕ້ອງມີຮ່ອງລະບາຍນ້ຳຈາກຄົວເຮືອນ, ມີຂຸມພັກນ້ຳຈາກການນຳໃຊ້ນ້ຳຄົວເຮືອນຫ້າງຮ້ານ, ສຳນັກງານຕ່າງໆ ທີ່ບໍ່ເປັນການລົບກວນຄົນອື່ນ ແລະ ສັງຄົມ, ມີກະຕ່າຖິ້ມຂີ້ເຫຍື້ອ ແລະ ອື່ນໆ.

10.5. ມີໜ້າທີ່ລະດົມ, ຊຸກຍູ້ຄອບຄົວຢູ່ພາຍໃນບ້ານຂອງຕົນ ໃນການປະກອບສ່ວນຄ່າພັນທະຕໍ່ຕົວເມືອງເປັນຕົ້ນແມ່ນ: ຄ່າບໍລິການເກັບມ້ຽນຂີ້ເຫຍື້ອ, ຄ່ານ້ຳເສຍຄົວເຮືອນ ແລະ ຄ່າພັນທະອື່ນໆ.

ມາດຕາ 11. ການກວດກາ.

11.1. ຄະນະຄຸ້ມຄອງ, ກວດກາຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ປະກອບດ້ວຍ: ອົງການພັດທະນາ ແລະ ບໍລິຫານຕົວເມືອງ, ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກການເງິນ, ພະແນກອຸດສາຫະກຳ ແລະ ການຄ້າ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພະແນກຈະລາຈອນແຂວງ, ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງໄຊຍະບູລີ ແລະ ພາກສ່ວນກ່ຽວຂ້ອງທີ່ມີສ່ວນຮ່ວມ ໃນການຈັດຕັ້ງປະຕິບັດ ໂດຍໄດ້ຮັບການແຕ່ງຕັ້ງຈາກເຈົ້າແຂວງ.

11.2. ຄະນະກວດກາດັ່ງກ່າວມີໜ້າທີ່ລົງກວດກາເທດສະບານເມືອງໄຊຍະບູລີ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະອາດ, ສວຍງາມ, ໃນທຸກໆເດືອນ ຕ້ອງນຳເອົາຜົນການກວດກາ ແລະ ປະເມີນຜົນວຽກງານດັ່ງກ່າວ ລາຍງານໃຫ້ຂັ້ນເທິງຊາບ ແລະ ສະເໜີຂໍທິດຊີ້ນຳໃນການແກ້ໄຂບັນຫາທີ່ຄ້າງຄາ.

11.3. ພະແນກການເງິນແຂວງຕ້ອງແຕ່ງຕັ້ງຄະນະກວດກາ ລົງກວດກາທາງດ້ານການເງິນຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ ເພື່ອຊ່ວຍກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງທາງດ້ານບັນຊີລາຍຮັບ ແລະ ລາຍຈ່າຍ ລວມທັງບັນຊີເງິນຝາກທະນາຄານຢ່າງໜ້ອຍປີລະຄັ້ງ ແລ້ວລາຍງານຂັ້ນເທິງຊາບ.

11.4. ອົງການພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ ຕ້ອງແຕ່ງຕັ້ງຄະນະຮັບຜິດຊອບຂັ້ນບ້ານຈຳນວນ 5 - 7 ທ່ານ ເພື່ອນຳພາຄຸ້ມຄອງ, ຕິດຕາມ, ກວດກາ ແລະ ອຳນວຍຄວາມສະດວກໃນການຈັດຕັ້ງປະຕິບັດຂໍ້ຕົກລົງ ສະບັບນີ້ໃຫ້ປະກົດຜົນເປັນຈິງ.

11.5. ຄະນະຮັບຜິດຊອບຂັ້ນບ້ານ ຕ້ອງລາຍງານການເຄື່ອນໄຫວວຽກງານຄຸ້ມຄອງບ້ານຂອງຕົນຕາມຂໍ້ຕົກລົງສະບັບນີ້ ທຸກໆ ເດືອນ, 3 ເດືອນ, 6 ເດືອນ ແລະ 1 ປີ ໃຫ້ອົງການພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ ເພື່ອລາຍງານຂັ້ນເທິງ.

## ໝວດທີ 4

## ການເກັບລາຍຮັບ ແລະ ການນຳໃຊ້ທຶນ

**ມາດຕາ 12.** ການເກັບລາຍຮັບ.

ອະນຸຍາດໃຫ້ອົງການພັດທະນາ ແລະ ບໍລິຫານຕົວເມືອງເກັບລາຍຮັບຄ່າບໍລິການ, ຄ່າພັນທະຕໍ່ຕົວເມືອງເຊິ່ງກຳນົດພື້ນຖານ ແລະ ການເກັບແຕ່ລະລາຍການຕາມຂໍ້ຕົກລົງສະບັບນີ້.

**ມາດຕາ 13.** ອັດຕາການເກັບຄ່າບໍລິການເກັບມ້ຽນຂີ້ເຫຍື້ອ.

ອົງການພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີ ໄດ້ຮັບໃຊ້ບໍລິການເກັບມ້ຽນຂີ້ເຫຍື້ອຈາກປະຊາຊົນ, ນັກທຸລະກິດ, ບໍລິສັດຫ້າງຮ້ານຕ່າງໆ ລວມໄປເຖິງສຳນັກງານ, ອົງການຂອງລັດ ແລະ ເອກະຊົນເຊິ່ງໄດ້ຄິດໄລ່ອັດຕາການເກັບແຕ່ລະປະເພດລຸ່ມນີ້:

**13.1.** ປະເພດຄອບຄົວທົ່ວໄປ.

ຄອບຄົວທົ່ວໄປ <u>10.000</u> ກີບ/ຄອບຄົວ/ເດືອນ.

**13.2.** ປະເພດທີ່ຈະຕ້ອງໄດ້ຈ່າຍ <u>18.000 ກີບ/ ເດືອນ.</u>

ຂາຍຂອງກິນສຸກ, ຂາຍເຂົ້າປຽກ, ເຂົ້າຊອຍ, ຂາຍຕຳຊົວະ, ຂາຍຕຳໝາກຮຸ່ງ ແລະ ຕຳອື່ນໆ, ຂາຍນ້ຳ, ຂາຍເຄື່ອງຍ່ອຍ, ຮ້ານຕັດຜົມ, ຮ້ານເສີມຄວາມງາມ(ເສີມສວຍ), ຮ້ານຫຍິບເຄື່ອງ, ຕົ້ມເຫຼົ້າ, ຜະລິດເສັ້ນເຂົ້າປຸ້ນ, ເສັ້ນເຝີ, ເສັ້ນເຂົ້າປຽກ, ເຂົ້າຊອຍ, ເຂົ້າຈີ່, ເຂົ້າໜົມ, ຮ້ານຂາຍຢາ ເລກ 3, ຮ້ານຕົວັດຖຸມີຄ່າ, ສະຖານທີ່ອົບນວດ, ຮ້ານສະນຸກເກີ.

**13.3.** ປະເພດທີ່ຈະຕ້ອງໄດ້ຈ່າຍ <u>20.000 ກີບ/ ເດືອນ.</u>

ຂາຍນ້ຳອ້ອຍ, ຂາຍໝາກພ້າວ, ຜະລິດໝັ່ງຍໍ່າ, ໂຮງງານຜະລິດເສັ້ນເຂົ້າປຸ້ນ, ເສັ້ນເຝີ, ເສັ້ນເຂົ້າປຽກ, ເສັ້ນເຂົ້າຊອຍ, ຮ້ານຂາຍຢາ ເລກ 2, ຮ້ານຂາຍທົວອາຫານ, ຮ້ານຂາຍລົດຖີບ, ຮ້ານຂາຍລົດຈັກ, ຮ້ານຂາຍເຄື່ອງໃຊ້ຫ້ອງການ, ຮ້ານຂາຍໂທລະສັບ, ຮ້ານຂາຍຕົ້ນໄມ້, ໂຖດອກໄມ້ປະດັບ, ຮ້ານຂາຍທາດບູຊາ ແລະ ຂາຍໂລງສົບ, ໂຮງສີເຂົ້າ.

**13.4.** ປະເພດທີ່ຈະຕ້ອງໄດ້ຈ່າຍ <u>30.000 ກີບ/ ເດືອນ.</u>

ເຕົາດິນຈີ່, ເຕົາຖ່ານ, ໂຮງງານປຸງແຕ່ງໄມ້ສຳເລັດຮູບ, ຮ້ານຂາຍຢາ 1, ຄູີນິກເອກະຊົນ, ສ້ອມແປງລົດຈັກ, ຮ້ານຕັດແກ້ວ, ຮ້ານປິ່ນເອກະສານ, ກ໊ອບປີ, ຮ້ານຖ່າຍຮູບຮ້ານຂາຍປີ້ງທຸກປະເພດ, ຮ້ານຂາຍຊີ້ນດາດ, ຊີ້ນຈຸ່ມ, ສະຖານທີ່ອອກກຳລັງກາຍ, ສະລອຍນ້ຳ, ຮ້ານສ້ອມແປງເຄື່ອງໃຊ້ໄຟຟ້າ, ຮ້ານອັດຊີດ, ຮ້ານຂາຍເຄື່ອງໄຟຟ້າ, ຮ້ານຂາຍເຄື່ອງອະໄລ່, ຮ້ານ

ຂາຍແກັດ, ຮ້ານຂາຍໄມ້ແປຮູບ, ຮ້ານຮັບຊື້-ຂາຍເຄື່ອງປ່າຂອງດົງ, ໂຮງງານຜະລິດນ້ຳດື່ມ, ນ້ຳກ້ອນ, ໂຮງງານເຟີນີເຈີ.

13.5. ປະເພດທີ່ຈະຕ້ອງໄດ້ຈ່າຍ <u>40.000 ກີບ/ ເດືອນ.</u>

ໂຮງງານປຸງແຕ່ງໄມ້ສຳເລັດຮູບ, ສ້ອມແປງລົດໃຫຍ່, ຮ້ານຕາບຢາງລົດໃຫຍ່, ເຮືອນພັກ ຂະໜາດ 10 ຫ້ອງລົງມາ.

13.6. ປະເພດທີ່ຈະຕ້ອງໄດ້ຈ່າຍ <u>50.000 ກີບ/ ເດືອນ.</u>

ຮ້ານຂາຍລົດໃຫຍ່, ຮ້ານຂາຍເຄື່ອງສິ່ງ, ຮ້ານຂາຍເຄື່ອງກໍ່ສ້າງ, ໂຮງເລື່ອຍໄມ້ຂະໜາດໃຫຍ່.

13.7. ປະເພດທີ່ຈະຕ້ອງໄດ້ຈ່າຍ <u>60.000 ກີບ/ ເດືອນ.</u>

ເຮືອນພັກ ຂະໜາດ 11 ຫ້ອງຫາ 15 ຫ້ອງຮ້ານອາຫານ, ຮ້ານບັນເທີງ, ຄາລາໂອເກະ, ລີສອດ, ຄິວລົດ, ປ້ຳນ້ຳມັນ, ຮ້ານອາຫານ.

13.8. ປະເພດທີ່ຈະຕ້ອງໄດ້ຈ່າຍ <u>80.000 ກີບ/ ເດືອນ.</u>

ຮ້ານຊຸບເປີມາເກັດ, ສູນການຄ້າ, ຕະຫຼາດຊຸມຊົນ, ບໍລິສັດ, ລັດວິສາຫະກິດ, ເຮືອນພັກ ຂະໜາດ 16 ຫ້ອງຫາ 19 ຫ້ອງ, ກອງບັນຊາການທະຫານແຂວງ, ກອງບັນຊາການ ປກສ ແຂວງ.

13.9. ປະເພດທີ່ຈະຕ້ອງໄດ້ຈ່າຍ ພິເສດ.

- ຕະຫຼາດຮ້ານຮຸນລາວ (ສີມຸງຄຸນ) — 1.602.000 ກີບ/ ເດືອນ
- ທະນາຄານ — 102.000ກີບ/ ເດືອນ
- ໂຮງແຮມ — 152.000 ກີບ/ ເດືອນ
- ໂຮງໝໍແຂວງ — 252.000ກີບ/ ຖັງວ /ຖັງ
- ຕະຫຼາດຈີນ (ນາໄຮ) — 252.000 ກີບ/ ຖັງວ/ຖັງ

13.10. ປະເພດສຳນັກງານ, ອົງການອ້ອມຂ້າງແຂວງ, ເມືອງ ແລະ ໂຮງຮຽນ.

13.10.1. ປະເພດທີ່ຈະຕ້ອງໄດ້ຈ່າຍ <u>50.000 ກີບ/ ເດືອນ.</u>

ຫ້ອງວ່າການປົກຄອງແຂວງ, ພະແນກການ, ອົງການທຽບເທົ່າຂັ້ນແຂວງ.

13.10.2. ປະເພດທີ່ຈະຕ້ອງໄດ້ຈ່າຍ <u>40.000 ກີບ/ ເດືອນ.</u>

ອົງການຈັດຕັ້ງມະຫາຊົນຂັ້ນແຂວງ, ຫ້ອງວ່າການປົກຄອງເມືອງ, ຫ້ອງການການເງິນເມືອງ.

13.10.3. ປະເພດທີ່ຈະຕ້ອງໄດ້ຈ່າຍ <u>30.000 ກີບ/ ເດືອນ.</u>

ຫ້ອງການ, ອົງການທຽບເທົ່າຂັ້ນເມືອງ.

13.10.4. ປະເພດໂຮງຮຽນ.

- ໂຮງຮຽນວິຊາຊີບ — 250.000 ກີບ/ ເດືອນ
- ໂຮງຮຽນການເມືອງ-ການປົກຄອງ — 80.000 ກີບ/ ເດືອນ
- ໂຮງຮຽນມັດທະຍົມຕອນປາຍ — 80.000 ກີບ/ ເດືອນ

- ໂຮງຮຽນເອກະຊົນ 80.000 ກີບ/ ເດືອນ
- ໂຮງຮຽນມັດທະຍົມຕອນຕົ້ນ 40.000 ກີບ/ ເດືອນ
- ໂຮງຮຽນປະຖົມ 30.000 ກີບ/ ເດືອນ
- ໂຮງຮຽນອະນຸບານ 20.000 ກີບ/ ເດືອນ

13.11. ຄ່າບໍລິການຂີ້ເຫຍື້ອພິເສດ.

- ງານບຸນເຮືອນ, ງານດອງ 150.000 ກີບ/ຖ້ຽວ/ຖັງ.
- ຄ່າບໍລິການຂີ້ເຫຍື້ອງານຕະຫຼາດນັດ 250.000 ກີບ/ຖ້ຽວ/ຖັງ.
- ຄ່າບໍລິການຂົນສິ່ງງ່າໄມ້, ເຫງົ້າໄມ້, ຕົ້ນໄມ້ ອື່ນໆ 300.000 ກີບ/ຖ້ຽວ.

ມາດຕາ 14. ອັດຕາການເກັບຄ່າບໍລິການຄຸ້ມຄອງສະໜາມຂີ້ເຫຍື້ອ.

14.1. ຄ່າບໍລິການຄຸ້ມຄອງສະໜາມຂີ້ເຫຍື້ອ ສະເພາະບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ.

| ລ/ດ | ເນື້ອໃນລາຍການ | ອັດຕາການເກັບ | ຫົວໜ່ວຍຄິດໄລ່ |
|---|---|---|---|
| 1 | ປະເພດລົດ ອີແຕນ, ລົດກະບະ, ລົດໄຖນາເດີນຕາມ, ລົດສິ້ງ | 10.000 ກີບ | ຖ້ຽວ |
| 2 | ປະເພດລົດ ຮຸນໄດ, ລົດໄຖນາໃຫຍ່ | 20.000 ກີບ | ຖ້ຽວ |
| 3 | ປະເພດລົດຮຸນໄດກະບະເສີມ (ດັດແປງ) | 40.000 ກີບ | ຖ້ຽວ |
| 4 | ປະເພດລົດ 6 ລໍ້ 3 ແມັດກ້ອນ | 50.000 ກີບ | ຖ້ຽວ |
| 5 | ປະເພດລົດ 6 ລໍ້ 5 ແມັດກ້ອນ | 70.000 ກີບ | ຖ້ຽວ |
| 6 | ປະເພດລົດ 6 ລໍ້ 8 ແມັດກ້ອນ | 100.000 ກີບ | ຖ້ຽວ |
| 7 | ປະເພດລົດ 10 ລໍ້ຂຶ້ນໄປ | 120.000 ກີບ | ຖ້ຽວ |

14.2. ຄ່າບໍລິການຄຸ້ມຄອງສະໜາມຈາກຜູ້ບໍລິການດູດອົດຖ່າຍ.

| ລ/ດ | ລາຍການ | ອັດຕາການເກັບ | ຫົວໜ່ວຍຄິດໄລ່ | ໝາຍເຫດ |
|---|---|---|---|---|
| 1 | ລົດປະເພດ3ແມັດກ້ອນ | 30.000ກີບ | 1 ຖ້ຽວລົດ | |
| 2 | ລົດປະເພດ5ແມັດກ້ອນ | 50.000ກີບ | 1 ຖ້ຽວລົດ | |

ມາດຕາ 15. ອັດຕາການເກັບຄ່າບໍລິການສະຖານທີ່ຈອດລົດ ຢູ່ເຂດສາທາລະນະຕາມຊຸມຊົນ ທີ່ກຳນົດໃຫ້ຈອດ.

| ລ/ດ | ລາຍການ | ອັດຕາການເກັບ | ຫົວໜ່ວຍຄິດໄລ່ | ໝາຍເຫດ |
|---|---|---|---|---|
| 1 | ລໍ້ຍູ້, ລົດຖີບ | 1.000ກີບ | ຄັ້ງ | |
| 2 | ລົດຈັກ | 2.000ກີບ | ຄັ້ງ | |
| 3 | ລົດໄຖນາເດີນຕາມ-ລົດສິ້ງ, ລົດຕຸກໆ | 3.000ກີບ | ຄັ້ງ | |
| 4 | ລົດ 4 ລໍ້ທຸກຊະນິດ | 5.000ກີບ | ຄັ້ງ | |
| 5 | ລົດ 6 ລໍ້ທຸກຊະນິດ | 6.000 ກີບ | ຄັ້ງ | |
| 6 | ລົດ 10 ລໍ້ທຸກຊະນິດ | 8.000ກີບ | ຄັ້ງ | |
| 7 | ລົດ 12 ລໍ້ທຸກຊະນິດ | 10.000ກີບ | ຄັ້ງ | |

ມາດຕາ 16. ຄ່ານ້ຳເສຍຄົວເຮືອນ.

ຄອບຄົວທົ່ວໄປ 3.000 ກີບ/ເດືອນ

ມາດຕາ 17. ຄ່າບຸລະນະສ້ອມແປງ ແລະ ກະແສໄຟຟ້າເບື້ອງທາງໃນ 24 ບ້ານເທດສະບານ.

| ລ/ດ | ລາຍການ | ອັດຕາການເກັບ | ຫົວໜ່ວຍຄິດໄລ່ | ໝາຍເຫດ |
|---|---|---|---|---|
| 1 | - ຄອບຄົວທົ່ວໄປ | 3.000ກີບ | ເດືອນ | |
| 2 | - ປະເພດທຸລະກິດການຜະລິດ | | | |
| | • ຂະໜາດນ້ອຍ | 4.000ກີບ | ເດືອນ | |
| | • ຂະໜາດກາງ | 5.000ກີບ | ເດືອນ | |
| | • ຂະໜາດໃຫຍ່ | 6.000ກີບ | ເດືອນ | |
| 3 | - ຮ້ານອາຫານ | | | |
| | • ຂະໜາດນ້ອຍ | 10.000ກີບ | ເດືອນ | |
| | • ຂະໜາດກາງ | 20.000ກີບ | ເດືອນ | |
| | • ຂະໜາດໃຫຍ່ | 30.000ກີບ | ເດືອນ | |
| 4 | - ບໍລິສັດ, ລັດວິສາຫະກິດ,ທະນາຄານທຸກສາຂາ | 120.000ກີບ | ເດືອນ | |
| 5 | - ໂຮງແຮມ | 120.000ກີບ | ເດືອນ | |
| 6 | - ເຮືອນພັກ ຂະໜາດ 5 – 10 ຫ້ອງ | 30.000ກີບ | ເດືອນ | |
| | - ເຮືອນພັກ ຂະໜາດ 11 – 15 ຫ້ອງ | 60.000ກີບ | ເດືອນ | |
| | - ເຮືອນພັກ ຂະໜາດ 16 – 19 ຫ້ອງ | 90.000ກີບ | ເດືອນ | |
| 7 | - ພະແນກການ,ປກສ,ປກຊ,ອົງການທຽບເທົ່າອ້ອມຂ້າງແຂວງ | 120.000ກີບ | ເດືອນ | |
| 8 | - ອົງການຈັດຕັ້ງອ້ອມຂ້າງແຂວງ | 60.000ກີບ | ເດືອນ | |
| 9 | - ຫ້ອງການອ້ອມຂ້າງເມືອງ, ປກສ,ປກຊ,ເມືອງ | 30.000ກີບ | ເດືອນ | |
| 10 | - ອົງການຈັດຕັ້ງອ້ອມຂ້າງເມືອງ | 20.000ກີບ | ເດືອນ | |
| 11 | - ໂຮງໝໍ | 120.000ກີບ | ເດືອນ | |

ມາດຕາ 18. ການອອກໃບອະນຸຍາດຕິດຕັ້ງປ້າຍໂຄສະນາປະເພດຕ່າງໆ ຕາມການມອບໂອນຂອງພະແນກ ຍທຂ.

18.1. ຄ່າບໍລິການອອກໃບອະນຸຍາດຕິດຕັ້ງປ້າຍໂຄສະນາສິນຄ້າຊະນິດແຂງ: ເຮັດດ້ວຍໄມ້, ໂລຫະຕ່າງໆຟິໂບຮຊີມັງ, ແຜ່ນປຼາສຕິກແຂງ ແລະ ອື່ນໆທີ່ຄ້າຍຄຽງ 3.5 ກີບ/1 ຊມ$^2$/ປ້າຍ.

18.2. ຄ່າບໍລິການອອກໃບອະນຸຍາດຕິດຕັ້ງປ້າຍໂຄສະນາສິນຄ້າຊະນິດອ່ອນ: ເຮັດດ້ວຍແຜ່ນແພ, ຜ້າຢາງປຼາສຕິກ 1 ກີບ/1 ຊມ$^2$/ປ້າຍ. (ອະນຸຍາດຕິດຕັ້ງ ບໍ່ກາຍ 7 ວັນ).

ມາດຕາ 19. ຄ່າບໍລິການນຳໃຊ້ທີ່ດິນເຂດສະຫງວນຂອງລັດ (ໃນຂອບເຂດເທດສະບານເມືອງ) ໂດຍບໍ່ມີການຊ້ຳຊ້ອນຈາກພາກສ່ວນກ່ຽວຂ້ອງ.

**19.1. ຄ່າບໍລິການນຳໃຊ້ທີ່ດິນຂອງລັດເພື່ອກິດຈະກຳ.**

19.1.1. ຄ່າບໍລິການນຳໃຊ້ທີ່ດິນສາທາລະນະທີ່ມີການພັດທະນາແລ້ວໃນໄລຍະສັ້ນ 1.000 ກີບ/1ມ$^2$/ເດືອນ.

19.1.2. ຄ່າບໍລິການນຳໃຊ້ທີ່ດິນສາທາລະນະທີ່ມີການພັດທະນາແລ້ວໃນໄລຍະຍາວ 10.000 ກີບ/1 ມ$^2$/ປີ.

19.1.3. ຄ່າບໍລິການນຳໃຊ້ທີ່ດິນສາທາລະນະທີ່ບໍ່ທັນພັດທະນາໃນໄລຍະສັ້ນ 500ກີບ/ແມ$^2$/ເດືອນ.

19.1.4. ຄ່າບໍລິການນຳໃຊ້ທີ່ດິນສາທາລະນະທີ່ບໍ່ທັນພັດທະນາໃນໄລຍະຍາວ 5.000ກີບ/ແມ$^2$/ປີ.

19.1.5. ຄ່າບໍລິການນຳໃຊ້ທີ່ດິນສາທາລະນະເພື່ອຈັດງານໃນໄລຍະສັ້ນບໍ່ເກີນ 1 ອາທິດ 1,000ກີບ/ແມ$^2$/ມື້.

**19.2.** ຄ່າບໍລິການນຳໃຊ້ທີ່ດິນຂອງລັດເພື່ອຕິດຕັ້ງປ້າຍໂຄສະນາ.

19.2.1. ຄ່າບໍລິການນຳໃຊ້ທີ່ດິນຂອງລັດສຳລັບປ້າຍທີ່ບໍ່ໃຊ້ແສງສະຫວ່າງ 100.000 ກີບ/ແມ$^2$/ປີ.

19.2.2. ຄ່າບໍລິການນຳໃຊ້ທີ່ດິນຂອງລັດສຳລັບປ້າຍທີ່ໃຊ້ແສງສະຫວ່າງ 200.000 ກີບ/1 ມ$^2$/ປີ. (ບໍ່ລວມຄ່າບໍລິການນຳໃຊ້ດິນຂອງລັດ).

ມາດຕາ **20.** ການນຳໃຊ້ທຶນ.

ອົງການພັດທະນາ ແລະ ບໍລິຫານຕົວເມືອງໄຊຍະບູລີນຳໃຊ້ທຶນຈາກການເກັບທີ່ກ່າວມາຂ້າງເທິງຕາມດຳລັດ ເລກທີ 177/ນຍ ແລະ ຂໍ້ຕົກລົງ ເລກທີ 2083/ກງ, ໄດ້ກຳນົດຕາມລະບຽບການ ແລະ ໄດ້ແບ່ງອອກເປັນ 2 ສ່ວນໃຫຍ່ຄື: ສ່ວນແບ່ງ 85% ນຳໃຊ້ເຂົ້າໃນການບໍລິຫານຕົວເມືອງ, ປົວລະບັດຮັກສາສິ່ງສາທາລະນະໃນຕົວເມືອງ, ອະນາໄມຖະໜົນຫົນທາງ, ຮ່ອງລະບາຍນ້ຳຂ້າງທາງ, ແກ້ໄຂນ້ຳຖ້ວມຂັງໃນຕົວເມືອງ, ປົວລະບັດຮັກສາສວນສາທາລະນະ, ນຳໃຊ້ເຂົ້າໃນວຽກງານກິດຈະກຳເກັບມ້ຽນ ແລະ ກຳຈັດຂີ້ເຫຍື້ອສິ່ງເສດເຫຼືອຕ່າງໆ ເປັນຕົ້ນແມ່ນ: ນ້ຳມັນລົດ, ເງິນເດືອນກຳມະກອນ, ຄ່າບຳລຸງຮັກສາ ແລະ ສ້ອມແປງພາຫະນະ, ຕັດແຕ່ງຕົ້ນໄມ້ປະດັບປະດາແຄມທາງ, ຊຳລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ ADB ຂອງໂຄງການຕົວເມືອງນ້ອຍ (ເງິນກູ້ຕໍ່ຊ່ວງກະຊວງການເງິນມອບໄວ້ໃຫ້) ນຳໃຊ້ວຽກງານບໍລິຫານຕ່າງໆ, ສ່ວນແບ່ງ 15% ມອບໃຫ້ບ້ານ ຫຼື ຜູ້ເກັບເງິນປະຈຳບ້ານ (ຜູ້ປະຕິບັດຕົວຈິງ).

## ໝວດທີ 5
## ວ່າດ້ວຍ ຂໍ້ຫ້າມ

ມາດຕາ **21.** ຂໍ້ຫ້າມສຳລັບພະນັກງານ.

21.1. ຫ້າມພະນັກງານເກັບລາຍຮັບ ນຳໃຊ້ໃບບິນເກັບເງິນທີ່ບໍ່ເປັນທາງການ, ໃບບິນບໍ່ມີກາຈ້ຳ, ປອມແປງໃບບິນ ແລະ ຫ້າມນຳໃຊ້ເງິນທີ່ເກັບໄດ້ໄປໝູນໃຊ້ວຽກສ່ວນຕົວຢ່າງເດັດຂາດ.

21.2. ຫ້າມພະນັກງານວິຊາການ ນາບຂູ່ ເພື່ອຜົນປະໂຫຍດສ່ວນຕົວໃນເວລາລົງປະຕິບັດໜ້າທີ່ວຽກງານ.

21.3. ຫ້າມພະນັກງານວິຊາການ ເຄື່ອນໄຫວໜ້າທີ່ເກີນຂອບເຂດເພື່ອຫວັງຜົນປະໂຫຍດສ່ວນຕົວ.

ມາດຕາ **22.** ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ.

22.1. ຫ້າມປ່ອຍສັດຊະຊາຍໃນຕົວເມືອງເຊິ່ງເປັນການລົບກວນຕໍ່ຄົນອື່ນ ແລະ ສັງຄົມ.

22.2. ຫ້າມນຳໃຊ້ບ່ອນສາທາລະນະແຄມທາງເປັນບ່ອນຝາກລົດໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

22.3. ຫ້າມເອົາລົດຂຶ້ນຢຽບທາງຍ່າງ, ຈອດລົດເທິງທາງຍ່າງ ແລະ ວາງສິ່ງກີດຂວາງໃສ່ຂອບທາງ, ທາງຍ່າງຢ່າງເດັດຂາດ.

22.4. ຫ້າມອັດຕັນຮ່ອງນ້ຳຂ້າງທາງ, ຄອງນ້ຳທຳມະຊາດໃນຕົວເມືອງ.

22.5. ຫ້າມຕາກເຄື່ອງ, ຢັ່ງເຄື່ອງພາດເຄື່ອງຕາມຮາວລະບຽງໜ້າເຮືອນ, ຢັ່ງຕາກຕາມຮົ້ວຢູ່ເຂດທາງຫຼວງໃຫຍ່ໃນຕົວເມືອງ.

22.6. ຫ້າມບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ປ່ອຍປະຖິ້ມເປົ່າຫວ່າງເກີດຫຍ້າຮົກເຮື້ອ, ເປື້ອນເປິະ ໃນຕົວເມືອງ.

22.7. ຫ້າມສ້າງກິ່ນເໝັນ, ຂີ້ວ, ຈູດ, ສຸມຂີ້ເຫຍື້ອ, ລະບົບບຳບັດນ້ຳບໍ່ດີ, ນ້ຳເສດເຫຼືອຈາກການເຮັດເຂົ້າປຸ້ນ, ເຮັດໜັງຍ່ຳ, ນ້ຳເປື້ອນຈາກຄົວເຮືອນ, ສຳນັກງານ, ຮ້ານອາຫານ, ຕະຫຼາດ ແລະ ອື່ນໆ, ເຊິ່ງເປັນການລົບກວນຕໍ່ຄົນອື່ນ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 23.** ນະໂຍບາຍຕໍ່ຜູ້ມີຜົນງານ.

ອົງການພັດທະນາ ແລະ ບໍລິຫານຕົວເມືອງ ເປັນຜູ້ສະຫລຸບລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຕົວເມືອງໃຫ້ຂັ້ນເທິງ ແລະ ສະເໜີປະຕິບັດນະໂຍບາຍ, ຍ້ອງຍໍບຸກຄົນ, ນິຕິບຸກຄົນ ກົມກອງທີ່ມີຜົນງານປະກອບສ່ວນ ໃນການຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ ທີ່ໄດ້ຮັບຜົນອັນສູງສຸດຕໍ່ການພັດທະນາຕົວເມືອງ ໄຊຍະບູລີ ຕາມຄວາມເໝາະສົມ.

**ມາດຕາ 24.** ມາດຕະການຕໍ່ຜູ້ລະເມີດ.

**24.1.** ມາດຕະການຕໍ່ຜູ້ລະເມີດ ການຮັກສາຄວາມເປັນລະບຽບຮຽບຮ້ອຍ ພາຍໃນຕົວເມືອງ:

24.1.1. ບຸກຄົນ, ນິຕິບຸກຄົນ ຕິດຕັ້ງປ້າຍໂຄສະນາ, ເສົາສັນຍານໂທລະສັບທີ່ບໍ່ມີໃບອະນຸຍາດ ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກພ້ອມທັງມ້າງອອກ ແລະ ຢຸດເຊົາການກໍ່ສ້າງ, ຖ້າຈະສືບຕໍ່ກໍ່ຕ້ອງໄດ້ຂໍອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງເສຍກ່ອນຈຶ່ງເລີ່ມລົງມືກໍ່ສ້າງໄດ້, ຄັ້ງທີ 2 ຈະຖືກປັບໃໝ 10% ຂອງມູນຄ່າການກໍ່ສ້າງ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.1.2. ບຸກຄົນ, ນິຕິບຸກຄົນ ວາງທໍ່ລອດທາງເຂົ້າເຮືອນ, ທຸບທາງຍ່າງ ແລະ ອື່ນໆທີ່ບໍ່ໄດ້ຮັບອະນຸຍາດຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກຢຸດເຊົາການກໍ່ສ້າງ, ຖ້າຈະສືບຕໍ່ກໍ່ຕ້ອງໄດ້ຂໍອະນຸຍາດຈາກພາກສ່ວນກ່ຽວຂ້ອງເສຍກ່ອນຈຶ່ງເລີ່ມລົງມືກໍ່ສ້າງໄດ້, ຄັ້ງທີ 2 ຈະຖືກປັບໃໝ **100.000** ກີບ ພ້ອມທັງປັບປຸງໃຫ້ຢູ່ໃນສະພາບເດີມ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.1.3. ບຸກຄົນ, ນິຕິບຸກຄົນ ປິດທາງສັນຈອນໂດຍບໍ່ໄດ້ຮັບອະນຸຍາດຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກ, ຄັ້ງທີ 2 ຈະຖືກປັບໃໝ **100.000** ກີບ/ມື້, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.1.4.ບຸກຄົນ, ນິຕິບຸກຄົນ ຕັ້ງໂຕະ, ຕັ້ງແຜ່ນປ້າຍໂຄສະນາຕ່າງໆຫຼືວາງຕາດຂາຍເຄື່ອງວັດສະດຸຕ່າງໆໃສ່ທາງຍ່າງໂດຍບໍ່ໄດ້ຮັບອະນຸຍາດ, ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກໃຫ້ຮື້ຖອນອອກ, ຄັ້ງທີ 2 ຈະຖືກປັບໃໝ **100.000** ກີບ/ມື້, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.1.5.ບຸກຄົນ, ນິຕິບຸກຄົນ ຖົມ ຫຼື ອັດຕັນຮ່ອງນ້ຳ, ຄອງນ້ຳທຳມະຊາດໃນຕົວເມືອງ ໂດຍບໍ່ໄດ້ຮັບອະນຸຍາດຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກໃຫ້ຮື້ຖອນອອກ, ຄັ້ງທີ 2 ຈະຖືກປັບໃໝ **200.000** ກີບ, ພ້ອມທັງປັບປຸງໃຫ້ຢູ່ໃນສະພາບເດີມ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.1.6.ບຸກຄົນ, ນິຕິບຸກຄົນ ຖົມດິນຖົມໜອງຢູ່ໃນເຂດອະນຸລັກເຂດສະຫງວນຂອງລັດໂດຍບໍ່ໄດ້ຮັບອະນຸຍາດ, ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກ, ຄັ້ງທີ 2 ຈະຖືກປັບໃໝ **200.000** ກີບ/ຄັນລົດ ພ້ອມທັງປັບປຸງໃຫ້ຢູ່ໃນສະພາບເດີມ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.1.7.ບຸກຄົນ, ນິຕິບຸກຄົນ ລ້ຽງສັດ, ປ່ອຍສັດ ຊະຊາຍຢູ່ໃນຕົວເມືອງ ເຊິ່ງເປັນການລົບກວນ, ເຮັດໃຫ້ຄົນອື່ນ ແລະ ສັງຄົມມີຄວາມເດືອດຮ້ອນ ຫຼື ລ້ຽງຕາມເຂດຫ້າມຕ່າງໆໃນຕົວເມືອງ ຈະຖືກສຶກສາອົບຮົມເຮັດບົດບັນທຶກ, ປັບໃໝ **50.000** ກີບ/ຄັ້ງ ຫຼື ຈະຖືກດຳເນີນຄະດີຕາມກົດໝາຍ.

24.1.8.ບຸກຄົນ, ນິຕິບຸກຄົນ ຕັດຕົ້ນໄມ້, ດອກໄມ້ປະດັບຢູ່ໃນສວນສາທາລະນະແລະແຄມທາງຫຼວງໂດຍບໍ່ໄດ້ຮັບອະນຸຍາດຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກໃຫ້ປູກທົດແທນຄືນ ແລະ ປົກປັກຮັກສາໃຫ້ຂຽວງາມ, ຄັ້ງທີ 2 ຈະຖືກປັບໃໝ **200.000** ກີບ/ຕົ້ນ ພ້ອມທັງຄິດໄລ່ຄ່າບູລະນະຮັກສາແຕ່ລະປີ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.1.9. ບຸກຄົນ, ນິຕິບຸກຄົນ ຂັບລົດຕຳໂຖດອກໄມ້ ແລະ ດອນແບ່ງທາງເປ່ເພ ຈະຖືກປັບໃໝ **200.000** ກີບ/ຄັ້ງ, ພ້ອມທັງສ້ອມແປງໃຫ້ຢູ່ໃນສະພາບເດີມ.

24.1.10. ບຸກຄົນ, ນິຕິບຸກຄົນ ນຳໃຊ້ດິນສາທາລະນະແຄມທາງເປັນບ່ອນຈອດລົດເພື່ອຜົນປະໂຫຍດສ່ວນຕົວ ແລະ ເຂດຫ້າມຈອດເປັນບ່ອນຈອດລົດໂດຍບໍ່ໄດ້ຮັບອະນຸຍາດ, ຄັ້ງທີ 1 ຈະຖືກສຶກສາອົບຮົມເຮັດບົດບັນທຶກ, ຄັ້ງທີ 2 ຈະຖືກປັບໃໝ **100.000** ກີບ/ຄັນ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.1.11. ບຸກຄົນ, ນິຕິບຸກຄົນ ເອົາລົດຂຶ້ນປຽບ ຫຼື ຈອດເທິງທາງຍ່າງ, ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກ, ຄັ້ງທີ 2 ຈະຖືກປັບໃໝຄື: ລົດຂົນສົ່ງ **200.000** ກີບ/ຄັນ, ລົດກະບະ, ລົດເກັງ, ລົດຈິບ,ລົດຕູ້ **100.000** ກີບ/ຄັນ, ລົດຈັກ **30.000** ກີບ/ຄັນ.

24.1.12. ບຸກຄົນ, ນິຕິບຸກຄົນ ວາງໄມ້, ກ້ອນເບຕົງ, ເຫຼັກ ດິນ, ຫີນ, ຊາຍ ແລະ ອື່ນໆ ກັນແລວນ້ຳໄຫຼແຄມທາງ, ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກໃຫ້ຮື້ຖອນອອກ, ຄັ້ງທີ 2 ຈະຖືກປັບໃໝ **100.000** ກີບ/ມື້, ຄັ້ງທີ 3 ຈະຖືກດຳເນີນຄະດີໃນກົດໝາຍ ຕາມແຕ່ລະກໍລະນີ.

24.1.13. ບຸກຄົນ, ນິຕິບຸກຄົນ ນຳໃຊ້ດິນສາທາລະນະເພື່ອຜົນປະໂຫຍດສ່ວນຕົວ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງເປັນຕົ້ນແມ່ນ: ລ້ອມຮົ້ວ, ເຮັດສວນ, ເຮັດຄອກສັດ, ບ່ອນເກັບມ້ຽນເຄື່ອງ, ສາງສິນຄ້າ ແລະ ອື່ນໆ, ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກໃຫ້ຢຸດເຊົາພ້ອມທັງມ້າງອອກຄັ້ງທີ 2 ຈະຖືກປັບໃໝ **200.000** ກີບ/ຄັ້ງ, ຄັ້ງທີ 3 ຈະຖືກດຳເນີນຄະດີໃນກົດໝາຍ ຕາມແຕ່ລະກໍລະນີ.

24.1.14. ບຸກຄົນໃດມີໜ້າເຮືອນບໍ່ເປັນລະບຽບເຊັ່ນ: ຕາກເຄື່ອງ, ຢັ່ງເຄື່ອງຕາກພາດຕາມລະບຽງໜ້າເຮືອນ, ຕາກພາດຮົ້ວຕາມແຄມຖະໜົນຫົນທາງ, ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກ, ຄັ້ງທີ 2 ຈະຖືກປັບໃໝ **50.000** ກີບ/ຄັ້ງ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.1.15. ບຸກຄົນ, ນິຕິບຸກຄົນ ເຮັດຄອກສັດໃສ່ເຂດສະຫງວນຂອງທາງຊອຍ, ທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ, ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກ, ຄັ້ງທີ 2 ຈະຖືກປັບໃໝ **100.000** ກີບ/ຄອກ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.1.16. ບຸກຄົນ, ນິຕິບຸກຄົນ ນຳລົດບັນທຸກເຄື່ອງເຂົ້າໃນຕົວເມືອງ ໂດຍບໍ່ໄດ້ຮັບອະນຸຍາດເຊິ່ງເຮັດໃຫ້ການສັນຈອນໃນຕົວເມືອງຕິດຂັດ, ສ້າງຄວາມເດືອດຮ້ອນຕໍ່ສັງຄົມ, ຄັ້ງທີ 1 ຈະຖືກສຶກສາອົບຮົມເຮັດບົດບັນທຶກ, ຄັ້ງທີ 2 ຈະຖືກປັບໃໝ **200.000** ກີບ/ຄັນ ຄັ້ງທີ 3 ຈະຖືກດຳເນີນຄະດີ ຕາມກົດ ໝາຍ ໃນແຕ່ລະກໍລະນີ.

**24.2. ມາດຕະການຕໍ່ຜູ້ລະເມີດ ການອະນາໄມ ແລະ ຮັກສາຄວາມສະອາດໃນຕົວເມືອງ.**

24.2.1. ຕອນດິນ ແລະ ສິ່ງກໍ່ສ້າງຂອງລັດ, ຂອງບຸກຄົນ, ນິຕິບຸກຄົນໃນຂອບເຂດຄວາມຮັບຜິດຊອບຂອງຕົນຢູ່ພາຍໃນເທດສະບານຕ້ອງປົກປັກຮັກສາ ແລະ ອະນາໄມໃຫ້ມີຄວາມສວຍງາມ, ຖ້າພາກສ່ວນໃດຫາກປະປ່ອຍໃຫ້ສະຖານທີ່ດັ່ງກ່າວຮົກເຮື້ອ, ເປ່ເພ, ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກ, ຄັ້ງທີ 2 ຈະຖືກປັບໃໝຄື: ເນື້ອທີ່ເດີ່ນມີຫຍ້າຕຶບໜາ, ຕາມບ່າທາງເຂດສະຫງວນຂອງທາງເຊິ່ງກັບຕອນດິນຕົນເກີດມີຫຍ້າຮົກເຮື້ອ ຈະຖືກປັບໃໝ **5.000** ກີບ/ມ²/ເດືອນ, ເຮືອນເປ່ເພຊຸດໂຊມ, ຮົກເຮື້ອບໍ່ມີການປັບປຸງຈະຖືກປັບໃໝ **100.000-300.000** ກີບ/ເດືອນ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.2.2. ປ່ອຍໃຫ້ຮົ້ວຊຸດໂຊມຕາມແຄມທາງ (ເປ່ເພ, ບໍ່ເປັນລະບຽບ), ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກ, ຄັ້ງທີ 2 ຈະຖືກປັບໃໝ **5.000** ກີບ/ແມັດຍາວ/ອາທິດ.

24.2.3. ປ່ອຍໃຫ້ເປັນປ່າຮົກເຮື້ອ, ເປື້ອນເປິະ ແລະ ມີສິ່ງກີດຂວາງ, ມີກອງດິນ, ຫີນແຮ່, ຊາຍ, ໄມ້, ກອງເຫຼັກແລະ ອື່ນໆທີ່ກີດຂວາງຕາມເສັ້ນທາງ, ຕາມທາງຍ່າງຂ້າງທາງ, ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກໃຫ້ອະນາໄມເກັບມ້ຽນໃຫ້ມີຄວາມສະອາດ, ຄັ້ງທີ 2 ຈະຖືກປັບໃໝ **100.000** ກີບ/ມື້ ພ້ອມທັງອະນາໄມໃຫ້ຢູ່ໃນສະພາບເດີມ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.2.4. ຮ່ອງລະບາຍນ້ຳທີ່ຂາດການອະນາໄມເຮັດໃຫ້ນ້ຳຂັງຈາກນ້ຳທຳມະຊາດ, ນ້ຳໃຊ້ຄົວເຮືອນ, ສຳນັກງານຄັ້ງທີ 1ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກໃຫ້ເຮັດອະນາໄມ, ຄັ້ງທີ 2 ຈະຖືກປັບໃໝ **100.000** ກີບ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍໃນແຕ່ລະກໍລະນີ.

24.2.5. ບຸກຄົນ, ນິຕິບຸກຄົນ ສ້າງຄວາມເປິເປື້ອນໃສ່ບ່ອນສາທາລະນະຄື:ເຮັດດິນ, ຫີນ, ຊາຍ ແລະສິ່ງເປິເປື້ອນອື່ນໆຕົກເຮ່ຍຊະຊາຍຕາມເສັ້ນທາງ (ເນື່ອງຈາກຂີ້ຕົມຕິດກົງລົດຫຼືຕົກຈາກລົດ), ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກພ້ອມທັງອະນາໄມໃຫ້ມີຄວາມສະອາດ, ຄັ້ງທີ 2 ຈະຖືກປັບໃໝ **200.000** ກີບ/ຄັ້ງ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.2.6. ບຸກຄົນ, ນິຕິບຸກຄົນ ຖິ້ມຂີ້ເຫຍື້ອອອກຈາກລົດ, ຄັ້ງທີ 1 ເຈົ້າຂອງລົດຈະຖືກສຶກສາອົບຮົມ, ເຮັດບົດບັນທຶກໃຫ້ເກັບມ້ຽນຄືນ, ຄັ້ງທີ 2 ຈະຖືກປັບໃໝ **30.000** ກີບ/ຄັນລົດ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.2.7. ບຸກຄົນ, ນິຕິບຸກຄົນ ຖິ້ມຂີ້ເຫຍື້ອຊະຊາຍຕາມຈຸດຕ່າງໆ, ຕາມເສັ້ນທາງ, ແມ່ນ້ຳ, ດິນເປົ່າຫວ່າງໂດຍບໍ່ແມ່ນສະໜາມທີ່ກຳນົດໃຫ້ຖິ້ມຂີ້ເຫຍື້ອຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກໃຫ້ເກັບມ້ຽນຄືນ, ຄັ້ງທີ 2 ຈະຖືກປັບໃໝ **150.000** ກີບ/ຄັ້ງ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

**24.3.** ມາດຕະການຕໍ່ຜູ້ລະເມີດ ການສ້າງຜົນກະທົບ ແລະ ສ້າງຄວາມເສຍຫາຍຕໍ່ສັງຄົມ.

24.3.1. ບຸກຄົນໃດທຳລາຍເສັ້ນທາງ, ຂຸດເສັ້ນທາງຫຼວງ, ທາງຊອຍພາຍໃນບ້ານໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ, ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກ ໃຫ້ກໍ່ສ້າງຄືນ ແລະ ຊົດເຊີຍຄ່າເສຍຫາຍ, ຄັ້ງທີ 2 ຈະຖືກປັບໃໝຄື: ທາງປູຢາງ **200.000** ກີບ/ແມັດຍາວ, ທາງປູຫີນດິນ **100.000** ກີບ/ແມັດຍາວ ແລະ ໃຫ້ສ້ອມແປງຄືນ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.3.2. ບຸກຄົນ, ນິຕິບຸກຄົນທຳລາຍສິ່ງຂອງສ່ວນລວມເປັນຕົ້ນແມ່ນ: ທາງຍ່າງ, ຮ່ອງລະບາຍນ້ຳ, ຕ້ານເຈື່ອນການກໍ່ສ້າງຕ່າງໆຂອງລັດ, ຕົ້ນໄມ້ ແລະ ອື່ນໆ, ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກ ໃຫ້ຢຸດເຊົາ ແລະ ຊົດເຊີຍຄ່າເສຍຫາຍ, ຄັ້ງທີ 2 ຈະຖືກປັບໃໝ **200.000** ກີບ/ຄັ້ງ ພ້ອມທັງປັບປຸງໃຫ້ຢູ່ສະພາບເດີມ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.3.3. ບຸກຄົນໃດກໍ່ກວນ, ທຳລາຍຊັບສິນບັດສ່ວນລວມ ຫຼື ຂອງຄົນອື່ນ ໂດຍເຈດຕະນາເປັນຕົ້ນ: ໂຖດອກໄມ້, ຮົ້ວ, ສວນ ແລະ ອື່ນໆ, ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກ ໃຫ້ຊົດເຊີຍຄ່າເສຍຫາຍ, ຄັ້ງທີ 2 ຈະຖືກປັບໃໝ **200.000** ກີບ ພ້ອມທັງປັບປຸງໃຫ້ຢູ່ສະພາບເດີມ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.3.4. ບຸກຄົນ, ນິຕິບຸກຄົນສ້າງກິ່ນເໝັນຈາກສ້ວມຖ່າຍ, ຈາກການເຮັດເຂົ້າປຸ້ນ, ເຮັດໜັງຍໍາ, ປ່ອຍນ້ຳເໝັນ, ລ້ຽງສັດຢູ່ແຄມເຮືອນ, ປ່ອຍສິ່ງເປັນພິດເຊິ່ງເປັນການລົບກວນຄົນອື່ນ ແລະ ສັງຄົມໃກ້ຄຽງຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກໃຫ້ແກ້ໄຂບໍ່ໃຫ້ມີກິ່ນລົບກວນ, ຄັ້ງທີ 2 ຈະຖືກປັບໃໝ **200.000** ກີບ ພ້ອມທັງແກ້ໄຂບໍ່ໃຫ້ມີກິ່ນລົບກວນພາກສ່ວນອື່ນຢູ່ໃກ້ຄຽງ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.3.5. ບຸກຄົນ, ນິຕິບຸກຄົນ ນຳລົດບັນທຸກໜັກເກີນຂະໜາດເຂົ້າໃນຕົວເມືອງເຮັດໃຫ້ເສັ້ນທາງມີການເປ່ເພເສຍຫາຍ, ຄັ້ງທີ 1 ຈະຖືກສຶກສາອົບຮົມ ເຮັດບົດບັນທຶກ ໃຫ້ສ້ອມແປງຄືນໃຫ້ຢູ່ໃນສະພາບເດີມ, ຄັ້ງທີ 2 ຈະຖືກປັບໃໝ **200.000** ກີບ/ຄັນ ພ້ອມທັງຄິດໄລ່ຄ່າສ້ອມແປງຄືນທັງໝົດ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

**24.4.** ມາດຕະການຕໍ່ຜູ້ລະເມີດ ການຄຸ້ມຄອງອຸປະໂພກ ແລະ ບໍລິໂພກໃນຕົວເມືອງ.

24.4.1. ບຸກຄົນໃດດຳເນີນທຸລະກິດເກີນຂະໜາດຫ້ອງຂອງຕົນເຊັ່ນ: ຮ້ານຂາຍເຄື່ອງທີ່ມີການວາງຂາຍກາຍຂະໜາດຮ້ານຂອງຕົນອອກມາວາງຢູ່ນອກຮ້ານກວມທາງຍ່າງ, ຕໍ່ເຕີມຮ້ານອອກມາ, ຮ້ານສ້ອມແປງທີ່ມີເຄື່ອງວາງຢູ່ນອກຂອບເຂດຮ້ານຂອງຕົນ ໂດຍໃຊ້ທາງຍ່າງເປັນເຂດບໍລິການເພື່ອຜົນປະໂຫຍດສ່ວນຕົວແລະອື່ນໆ. ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກ ໃຫ້ຮື້ຖອນອອກ, ຄັ້ງທີ 2ຈະຖືກປັບໃໝ **200.000** ກີບ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

24.4.2. ບຸກຄົນໃດຖອກນ້ຳມັນເຄື່ອງ, ລ້າງເຄື່ອງເປື້ອນເປິະຊະຊາຍຕາມທາງຍ່າງ, ຕາມເຂດສະຫງວນແຄມທາງ, ຄັ້ງທີ 1 ຈະຖືກສຶກສາອົບຮົມ, ເຮັດບົດບັນທຶກ ໃຫ້ຢຸດເຊົາ, ຄັ້ງທີ 2 ຈະຖືກປັບໃໝ **200.000** ກີບ, ຄັ້ງທີ 3 ຈະຖືກດຳເນີນຄະດີຕາມກົດໝາຍ ໃນແຕ່ລະກໍລະນີ.

## ໝວດທີ 7

## ບົດບັນຍັດສຸດທ້າຍ

**ມາດຕາ 25.** ການຈັດຕັ້ງປະຕິບັດ.

25.1. ອົງການພັດທະນາ ແລະ ບໍລິຫານຕົວເມືອງ ຕ້ອງເປັນໃຈກາງ ໃນການສົມທົບ ກັບຄະນະຄຸ້ມຄອງກວດກາຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງ ແລະ ໜ່ວຍງານກວດກາຂັ້ນບ້ານ ລົງ

ກວດກາຂອບເຂດຄວາມຮັບຜິດຊອບຂອງຕົນ ອາທິດລະ 1 ຄັ້ງພ້ອມທັງສະຫຼຸບລາຍງານໃຫ້ຂັ້ນເທິງຊາບເປັນແຕ່ລະໄລຍະ ເພື່ອສະເໜີຂໍທິດຊີ້ນໍາໃນການແກ້ໄຂບັນຫາ ແລະ ສະເໜີຍ້ອງຍໍບຸກຄົນ, ກົມກອງທີ່ມີຜົນງານ.

25.2. ການປັບໃໝແຕ່ລະຄັ້ງ ຕ້ອງໃຊ້ບິນທາງການ ເຊິ່ງອົງການພັດທະນາ ແລະ ບໍລິຫານຕົວເມືອງ ອະນຸມັດໃຫ້.

25.3. ອົງການພັດທະນາ ແລະ ບໍລິຫານຕົວເມືອງ ນໍາໃຊ້ເງິນປັບໃໝແບ່ງອອກເປັນ 2 ສ່ວນຄື: 30% ມອບເຂົ້າອົງການພັດທະນາ ແລະ ບໍລິຫານຕົວເມືອງ ໃຊ້ຈ່າຍບໍລິຫານ. 70% ມອບໃຫ້ຜູ້ຈັດຕັ້ງປະຕິບັດຕົວຈິງ.

25.4. ອົງການພັດທະນາ ແລະ ບໍລິຫານຕົວເມືອງ ຕ້ອງສະຫຼຸບບັນຊີສັງລວມ ແລະ ລາຍງານລາຍຮັບ-ລາຍຈ່າຍຂອງຕົນ ພ້ອມທັງວາງແຜນການກໍ່ສ້າງລາຍຮັບ ແລະ ກໍານົດລາຍຈ່າຍໃນປີຕໍ່ໄປ ໂດຍປະຕິບັດຕາມຂໍ້ກໍານົດ ແລະ ລະບຽບກົດໝາຍ ວ່າດ້ວຍການບັນຊີແຫ່ງລັດໃຫ້ຂັ້ນເທິງຊາບໃນແຕ່ລະປີ.

25.5. ອົງການພັດທະນາ ແລະ ບໍລິຫານຕົວເມືອງ ໄຊຍະບູລີ ຕ້ອງແຕ່ງຕັ້ງໜ່ວຍງານຊຸກຍູ້ເກັບລາຍຮັບຈາກແຫຼ່ງລາຍຮັບຕ່າງໆ ທີ່ໄດ້ກໍານົດຢູ່ຂ້າງເທິງນີ້ ໃຫ້ເປັນອັນລະອຽດ ແລະ ຈະແຈ້ງ.

25.6. ອົງການພັດທະນາ ແລະ ບໍລິຫານຕົວເມືອງ ຕ້ອງເປັນໃຈກາງປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດມາດຕະການປັບໃໝຕ່າງໆໃຫ້ມີຜົນສັກສິດ.

25.7. ມອບໃຫ້ອົງການພັດທະນາ ແລະ ບໍລິຫານຕົວເມືອງ ໄຊຍະບູລີ ປະສານສົມທົບກັບທຸກຂະແໜງການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 26. ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ເຈົ້າແຂວງ

ພົງສະຫວັນ ສິດທະວົງ